ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ: 189 /ພກພ
ນະຄອນຫຼວງວຽງຈັນ, ວັນທີ: 03 MAY 2022

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,
ຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ນັບຖື;
ເລື່ອງ: ຊີ້ແຈງກ່ຽວກັບການເປີດເຜີຍເອກະສານລາຍງານການເງິນປະຈຳປີ 2021 ລ່າຊ້າ.

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ໜັງສືແຈ້ງຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 462/ຕລຊລ, ລົງວັນທີ 25 ເມສາ 2022.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງຕາມລະບຽບການທີ່ກ່ຽວຂ້ອງ ພກພ ຕ້ອງເປີດເຜີຍຂໍ້ມູນເອກະສານລາຍງານການເງິນປະຈຳປີ 2021 ພາຍໃນວັນເດັດຖານທີ 29 ເມສາ 2022. ແຕ່ໃນພາກປະຕິບັດຕົວຈິງ ພກພ ບໍ່ສາມາດເປີດເຜີຍຂໍ້ມູນເອກະສານລາຍງານການເງິນດັ່ງກ່າວໄດ້ ພາຍໃນກຳນົດເວລາ ສາເຫດມາຈາກບໍລິສັດ ພຣາຍສ໌ ວໍເຕີ້ເຮົ້າສ໌ ກຸບເປີ ສ໌ (ລາວ) ຈຳກັດຜູ້ດຽວ ທີ່ເຮັດໜ້າທີ່ເປັນບໍລິສັດ ກວດສອບປະຈຳປີ 2021 ຍັງບໍ່ໄດ້ ສົ່ງບົດລາຍງານການເງິນປະຈຳປີ 2021 ສະບັບຂອງແທ້ ໃຫ້ບໍລິສັດ ແລະ ຕອນນີ້ ກຳລັງປະສານເອົາບົດລາຍງານການເງິນປະຈຳປີ 2021 ສະບັບຂອງແທ້ ກັບ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸບເປີ ສ໌ (ລາວ) ຈຳກັດຜູ້ດຽວ ຢູ່ ສະນັ້ນ, ຈຶ່ງເຮັດໃຫ້ ພກພ ບໍ່ສາມາດເປີດເຜີຍບົດລາຍງານການເງິນປະຈຳ ປີ 2021 ໄດ້ ຕາມລະບຽບການ.

ຕໍ່ກັບບັນຫາດັ່ງກ່າວ ພກພ ກຳລັງສຸມໃສ່ແກ້ໄຂດ້ວຍຄວາມຮັບຜິດຊອບສູງ ເຊິ່ງຄາດວ່າຈະສາມາດເປີດເຜີຍເອກະສານລາຍງານການເງິນດັ່ງກ່າວ ຊ້າສຸດບໍ່ໃຫ້ກາຍວັນທີ.06/05/2022.

ດັ່ງນັ້ນ, ຈຶ່ງຖືເປັນກຽດຮຽນມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມສົມຄວນ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່

ສີທາ ພິມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ໂທລະສັບ/ແຟັກ: +856 21 265394.; E-mail: info@pcdlao.com; website: www.pcdlao.com